**ມິຊຊາສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານ**

**ອາທິດສຸດທ້າຍຂອງປີພິທີກຳ C**

**ວັນທີ 24 ພະຈິກ 2019**




**ພຣະວໍລະສານໂດຍນັກບຸນລູກາ 23, 35-43**

ໃນເວລານັ້ນ, ພວກປະຊາຊົນພາກັນຢືນເບິ່ງຢູ່, ພວກຫົວໜ້າເອງກໍເວົ້າເຍີ້ຍຫຍັນພຣະອົງວ່າ: ມັນໄດ້ຊ່ວຍຜູ້ອື່ນໃຫ້ພົ້ນ; ຖ້າມັນແມ່ນພຣະກຣິສໂຕຜູ້ພຣະເຈົ້າເລືອກສັນແລ້ວກໍໃຫ້ມັນຊ່ວຍຕົວເອງໃຫ້ພົ້ນເສັຍ. ພວກທະຫານກໍໝິ່ນປະໝາດພຣະອົງດ້ວຍ. ເມື່ອເຂົາເອົານ້ຳສົ້ມມາຖະຫວາຍ, ເຂົາເວົ້າວ່າ: ຖ້າເຈົ້າເປັນກະສັດຂອງຊາດຢູເດວ ກໍຈົ່ງຊ່ວຍຕົວເອງໃຫ້ພົ້ນເສັຍ! ຢູ່ເທິງຫົວພຣະອົງມີປ້າຍຂຽນວ່າ: ຜູ້ນີ້ຄືກະສັດຂອງຊາວຢູເດວ.

ຜູ້ຮ້າຍຜູ້ໜຶ່ງຖືກຄຶງພ້ອມກັບພຣະອົງ ກໍເວົ້າສົບປະໝາດພຣະອົງວ່າ: ເຈົ້າເປັນພຣະກຣິສໂຕບໍ? ຈົ່ງຊ່ວຍຕົວເອງແລະຊ່ວຍເຮົານຳດ້ວຍ. ແຕ່ຜູ້ຮ້າຍຜູ້ໜຶ່ງເວົ້າຄັດຄ້ານວ່າ: ເຈົ້າກໍຖືກໂທດຄືກັນ, ແລ້ວຍັງບໍ່ຢ້ານຈຽມພຣະເປັນເຈົ້າບໍ? ສ່ວນພວກເຮົານີ້ສົມຕ້ອງໂທດແລ້ວ, ຍ້ອນວ່າພວກເຮົາຕ້ອງຮັບຜົນຕາມກັມຂອງພວກເຮົາ. ສ່ວນເພິ່ນນັ້ນບໍ່ມີຜິດຫຍັງເລີຍ. ແລ້ວເຂົາທູນພຣະອົງວ່າ: ໂອພຣະເຢຊູເຈົ້າ! ເມື່ອພຣະອົງສະເດັດເຂົ້າສູ່ພຣະລາໄຊຂອງພຣະອົງແລ້ວ ໂຜດລຳລຶກເຖິງຂ້ານ້ອຍດ້ວຍ. ພຣະອົງກ່າວຕອບວ່າ: ເຮົາບອກເຈົ້າວ່າ: ມື້ນີ້ເອງເຈົ້າຈະຢູ່ກັບເຮົາໃນສະຫວັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 23, 35-43**

ວັນນີ້ເປັນວັນອາທິດສຸດທ້າຍຂອງປີພິທີກໍາ C, ເປັນວັນທີ່ພຣະກຣິສຕະຈັກສົມໂພດພຣະກຣິສໂຕກະສັດແຫ່ງໂລກກະຈັກວານ. ວັນສົມໂພດນີ້ມີຄວາມໝາຍຢ່າງໃດ? ທີ່ຈິງແລ້ວວັນສະຫລອງການເປັນກະສັດຂອງພຣະເຢຊູເຈົ້າແມ່ນວັນພະຫັດໃນອາທິດທີ 6 ກໍານົດປາສກາ, ເປັນວັນສົມໂພດພຣະເຢຊູເຈົ້າສະເດັດຂຶ້ນສະຫວັນຄືນເມືອຫາພຣະບິດາແລະປະທັບນັ່ງຢູ່ເບື້ອງຂວາໃນພຣະລາໄຊຂອງພຣະອົງ.

ສ່ວນວັນອາທິດສຸດທ້າຍຂອງປີພິທີກໍານີ້ພຣະກຣິສຕະຈັກເຊີນຊວນພວກເຮົາໃຫ້ເພັ່ງຊົມພຣະລາໄຊຂອງພຣະເຢຊູເຈົ້າໃນການເວລາ, ໃນຊີວິດຂອງພວກເຮົາທີ່ກໍາລັງກ້າວໄປສູ່ຄວາມຄົບຄັນໃນວາລະສຸດທ້າຍແຫ່ງໂລກນີ້.

ໃນວັນສົມໂພດພຣະກຣິສໂຕກະສັດ, ພຣະກຣິສຕະຈັກພັດໃຫ້ພວກເຮົາອ່ານແລະລໍາເພິງເຖິງເຫດການເມື່ອພຣະເຢຊູເຈົ້າຖືກຄຶງກາງເຂນຢູ່ເທິງໂນນທີ່ມີຊື່ວ່າໂນນກະໂຫລກຫົວ. ພຣະບັນລັງຂອງພຣະອົງຄືໄມ້ກາງເຂນນັ້ນເອງ. ສ່ວນມຸງກຸດຂອງກະສັດພັດແມ່ນມຸງກຸດໜາມທີ່ທໍາໃຫ້ພຣະເຢຊູເຈົ້າຕ້ອງເຈັບປວດສັກພຽງໃດ. ເຄື່ອງອາພອນຂອງກະສັດພັດແມ່ນຜ້າແພຮັດແອວທີ່ເຕັມດ້ວຍເຫື່ອແລະເລືອດຂອງພຣະອົງ. ຢູ່ເທິງຫົວຂອງພຣະອົງມີປ້າຍຂຽນວ່າ: « ຜູ້ນີ້ຄືກະສັດຂອງຊາວຢູເດວ ». ສ່ວນຜູ້ຢູ່ຄຽງຂ້າງກະສັດພັດແມ່ນໂຈນຮ້າຍສອງຄົນບົນກາງເຂນ. ສິ່ງເຫລົ່ານີ້ມີຄວາມໝາຍແນວໃດ? ວາຈາຂອງພຣະເຈົ້າຕອນນີ້ຢາກສອນພວກເຮົາຫຍັງ?

ສິ່ງທໍາອິດທີ່ພວກເຮົາສໍາພັດໄດ້ຄືການເປັນກະສັດຂອງພຣະກຣິສໂຕເຈົ້ານັ້ນບໍ່ເປັນເໝືອນກະສັດແຫ່ງໂລກນີ້ທີ່ມີອໍານາດ, ກຽດຕິຍົດແລະຄວາມຮັ່ງມີສີສຸກ. ແຕ່ພຣະກຣິສໂຕກະສັດນັ້ນພຣະອົງເປັນຜູ້ຮັບໃຊ້ທີ່ຍອມຮັບທໍລະມານຕາຍເພື່ອລາຊາດອນຂອງພຣະອົງ. ດັ່ງນັ້ນ, ເສັ້ນທາງແຫ່ງກາງເຂນຈຶ່ງເປັນເສັ້ນທາງທີ່ທໍາໃຫ້ພວກເຮົາພ້ອມກັບພຣະເຢຊູເຈົ້າເຂົ້າສູ່ພຣະລາໄຊຂອງພຣະບິດາອັນແມ່ນອານາຈັກສະຫວັນນັ້ນເອງ. ສິ່ງນີ້ສະແດງອອກຢູ່ບ່ອນໃດ? ສິ່ງນີ້ສະແດງອອກຢູ່ບ່ອນວ່າເມື່ອໂຈນຜູ້ຮ້າຍກັບໃຈບົນກາງເຂນຢູ່ເບື້ອງຂວາຂອງພຣະເຢຊູເຈົ້າວອນຂໍພຣະອົງວ່າ: « ໂອພຣະເຢຊູເຈົ້າ! ເມື່ອພຣະອົງສະເດັດເຂົ້າສູ່ພຣະລາໄຊຂອງພຣະອົງແລ້ວ ໂຜດລໍາລຶກເຖິງຂ້ານ້ອຍດ້ວຍ ». ແລ້ວພຣະອົງໄດ້ສັນຍາກັບເຂົາວ່າ: « ວັນນີ້ເອງ, ເຈົ້າຈະຢູ່ກັບເຮົາໃນສະຫວັນ ». ໝາຍວ່າເສັ້ນທາງແຫ່ງກາງເຂນບໍ່ແມ່ນເສັ້ນທາງທີ່ນໍາພວກເຮົາໄປສູ່ຄວາມຕາຍ, ແຕ່ແມ່ນເສັ້ນທາງທີ່ນໍາພວກເຮົາໄປສູ່ຄວາມຮອດ, ໄປສູ່ຊີວິດ. ແລະພຣະລາໄຊຂອງພຣະເຢຊູເຈົ້າບໍ່ແມ່ນຢູ່ບົນແຜ່ນດິນນີ້, ແຕ່ໃນເມືອງສະຫວັນ.

ສິ່ງທີສອງທີ່ພວກເຮົາສໍາພັດໄດ້ຄືພຣະເຢຊູກຣິສໂຕກະສັດຂອງພວກເຮົາ, ພຣະອົງເປັນຜູ້ຊອບທໍາ, ບໍ່ໄດ້ກະທໍາບາບ. ສິ່ງນີ້ສະແດງອອກໃຫ້ພວກເຮົາເຫັນຜ່ານທາງຄໍາເວົ້າຂອງໂຈນຮ້າຍຜູ້ກັບໃຈບົນກາງເຂນວ່າ: « ສ່ວນພວກເຮົານີ້ສົມຕ້ອງໂທດແລ້ວ, ຍ້ອນວ່າພວກເຮົາຕ້ອງຮັບຜົນຕາມກັມຂອງພວກເຮົາ. ສ່ວນເພິ່ນນັ້ນບໍ່ມີຜິດຫຍັງເລີຍ ». ໝາຍວ່າຍ້ອນຮັກພວກເຮົາພຣະອົງຈຶ່ງຍອມແບກເອົາບາບໂທດທຸກຢ່າງຂອງພວກເຮົາບົນບ່າຂອງພຣະອົງເພື່ອໃຫ້ພວກເຮົາໄດ້ເປັນຜູ້ຊອບທໍາແລະໄດ້ຮອດຊີວິດ.

ຂໍໃຫ້ວັນສົມໂພດພຣະກຣິສໂຕກະສັດນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມຮັກຂອງພຣະເຢຊູເຈົ້າທີ່ມີຕໍ່ພວກເຮົາ ຜ່ານທາງການທໍລະມານຕາຍບົນໄມ້ກາງເຂນເພື່ອໃຫ້ພວກເຮົາໄດ້ຮອດຊີວິດແລະເຂົ້າສູ່ພຣະລາໄຊຂອງພຣະເຈົ້າເໝືອນກັບໂຈນຜູ້ຮ້າຍກັບໃຈທີ່ພຣະເຢຊູເຈົ້າສັນຍາກັບເຂົາວ່າ: « ວັນນີ້ເອງ, ເຈົ້າຈະຢູ່ກັບເຮົາໃນສະຫວັນ ». ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ